# ແຈ້ງຂ່າວ ຄວາມຄືບໜ້າອຸບັດຕິເຫດເຮືອບິນຕົກ

ກະຊວງໂຍທາທິການ ແລະ ຂົນສົ່ງ ຂໍແຈ້ງຄວາມຄືບໜ້າ ການດຳເນີນການຊອກຄົ້ນ ແລະ ເກັບກູ້ຊາກສົບຜູ້ປະສົບເຄາະຮ້າຍ ຈາກອຸບັດຕິເຫດເຮືອບິນຕົກທີ່ເມືອງປາກເຊ, ໃນວັນທີ 22/10/2013 (ສະຖິຕິໃນເວລາ 18:00 ໂມງ) ພົບເຫັນ ແລະເກັບກູ້ໄດ້ 1 ສົບ ແລະ 11 ສິ້ນສ່ວນ, ລວມ 42 ສົບ ແລະ 28 ສິ້ນສ່ວນ.

ຜົນການບັນທຶກຂໍ້ມູນ ແລະຊັນນະສູດເບື້ອງຕົ້ນ ໄດ້ຈຳນວນ 27 ສົບ ແລະ 28 ສິ້ນສ່ວນ ເພື່ອສົ່ງໄປວິເຄາະຂໍ້ມູນ DNA ທີ່ປະເທດໄທ.

ປະຈຸບັນການສືບສວນ-ສອບສວນຫາສາເຫດ ຂອງອຸປະຕິເຫດເບື້ອງຕົ້ນ ໄດ້ແບ່ງອອກເປັນ 03 ຈຸງານຄື: (01) ຈຸຊອກຫາຊາກເຮືອບິນ, (02) ຈຸຊອກຫາກ່ອງດຳ ແລະ (03) ຈຸເກັບກຳຂໍ້ມູນສະພາບດິນຟ້າອາກາດ ໃນມື້ເກີດເຫດ; ໂດຍໃນແຕ່ລະຈຸປະກອບມີ ຜູ້ຊ່ຽວຊານຈາກບໍລິສັດແອບັດປະເທດຝຣັ່ງ ແລະ ກອງທັບອາກາດໄທ ຮ່ວມນຳ.

ສຳລັບຜົນການຊອກຫາຊາກເຮືອບິນ ແລະກ່ອງດຳ, ມາຮອດແລງວັນທີ 21/10/2013 ສາມາດກວດພົບສ່ວນຫາງຂອງເຮືອບິນແລ້ວ ແລະຈຸດພິກັດຂອງກ່ອງດຳແລ້ວ, ປະຈຸບັນກຳລັງສຸມໃສ່ຊອກຫາວິທີເພື່ອຍົກສ່ວນຫາງ ຂອງເຮືອບິນຂຶ້ນມາໃຫ້ໄດ້. ຫາກມີຄວາມຄືບໜ້າເພີ່ມເຕີມປະການໃດ ຈະລາຍງານໃຫ້ທ່ານຊາບຕື່ມອີກ.